ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 236 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍການໄຫລະຄົມມະນາຄົມ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 32/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍການໄທລະຄົມມະນາຄົມ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 12/ຄປຈ, ລົງວັນທີ 15 ທັນວາ 2021.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍ ວ່າດ້ວຍການໄທລະຄົມມະນາຄົມ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 32 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ
# ການໂທລະຄົມມະນາຄົມ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 10 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 05 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍການໂທລະຄົມມະນາຄົມ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ, ກວດກາ ວຽກງານໂທລະຄົມມະນາຄົມ ເພື່ອໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ, ມີຄຸນນະພາບ, ທົ່ວເຖິງ, ມີຄວາມສະດວກ, ຍຸຕິທຳ, ພັດທະນາຢ່າງຕໍ່ເນື່ອງ ແລະ ທັນເປັນທັນສະໄໝ ແນໃສ່ຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພຂອງຊາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ການໂທລະຄົມມະນາຄົມ

ການໂທລະຄົມມະນາຄົມ ແມ່ນ ການຕິດຕໍ່ສື່ສານ ລະຫວ່າງຕົ້ນທາງ ຫາ ປາຍທາງ ເພື່ອສົ່ງ ແລະ ຮັບຂໍ້ມູນທີ່ຢູ່ໃນຮູບແບບຂອງສຽງ, ຮູບພາບ, ຮູບພາບເຄື່ອນໄຫວ, ຕົວເລກ, ຕົວອັກສອນ, ສັນຍານ, ເຄື່ອງໝາຍ ຫຼື ຮູບແບບຂໍ້ມູນອື່ນ ໂດຍຜ່ານລະບົບສາຍ, ລະບົບແສງ, ລະບົບຄື້ນຄວາມຖີ່ວິທະຍຸສື່ສານ, ລະບົບແມ່ເຫຼັກໄຟຟ້າ, ລະບົບອື່ນໃດໜຶ່ງ ຫຼື ຫຼາຍລະບົບລວມກັນ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຄືອຂ່າຍໂທລະຄົມມະນາຄົມ** ໝາຍເຖິງ ອຸປະກອນໂທລະຄົມມະນາຄົມ ທີ່ເຊື່ອມຕໍ່ເຂົ້າກັນໂດຍກົງ ຫຼື ຜ່ານສູນກາງການເຊື່ອມຕໍ່ ເພື່ອການໂທລະຄົມມະນາຄົມ ຊຶ່ງປະກອບດ້ວຍເຄືອຂ່າຍມີສາຍ ແລະ ບໍ່ມີສາຍ;
2. **ຊັບພະຍາກອນໂທລະຄົມມະນາຄົມ** ໝາຍເຖິງ ເລກໝາຍໂທລະຄົມມະນາຄົມ, ຊັບພະຍາກອນອິນເຕີເນັດ, ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມ;
3. **ຊັບພະຍາກອນອິນເຕີເນັດ** ໝາຍເຖິງ ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ;

4. **ອຸປະກອນໂທລະຄົມມະນາຄົມ** ໝາຍເຖິງ ອຸປະກອນທີ່ປະກອບເຂົ້າເປັນລະບົບສື່ສານ ເປັນຕົ້ນ ລະບົບຊຸມທາງໂທລະສັບ, ລະບົບສາຍສົ່ງ, ສະຖານີສົ່ງ-ຮັບສັນຍານຄື້ນຄວາມຖີ່ວິທະຍຸສື່ສານ, ລະບົບເຄື່ອງໄຟຟ້າຫຼໍ່ລ້ຽງ, ເສົາອາກາດ, ສາຍອາກາດ, ໜ່ວຍໂທລະສັບ, ຊິ້ນສ່ວນ ແລະ ວັດຖຸທີ່ນຳໃຊ້ເຂົ້າໃນການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;

5. **ໂຄງລ່າງພື້ນຖານໂທລະຄົມມະນາຄົມ** ໝາຍເຖິງ ອຸປະກອນໂທລະຄົມມະນາຄົມ, ເຄືອຂ່າຍໂທລະຄົມມະນາຄົມ ແລະ ສິ່ງປຸກສ້າງທີ່ຮັບໃຊ້ວຽກງານໂທລະຄົມມະນາຄົມ;

6. **ເລກໝາຍໂທລະສັບ** ໝາຍເຖິງ ເລກໝາຍໂທລະສັບເຄື່ອນທີ່, ຕັ້ງໂຕະແບບມີສາຍ ແລະ ບໍ່ມີສາຍ;

7. **ການເຊື່ອມຕໍ່ເຄືອຂ່າຍ** ໝາຍເຖິງ ການເຊື່ອມຕໍ່ ລະຫວ່າງເຄືອຂ່າຍໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການ ເພື່ອໃຫ້ຜູ້ໃຊ້ບໍລິການ ສາມາດຕິດຕໍ່ສື່ສານກັນໄດ້;

8. **ອິນເຕີເນັດ** ໝາຍເຖິງ ການເຊື່ອມຕໍ່ລະບົບເຄືອຂ່າຍຄອມພິວເຕີໃນທົ່ວໂລກເຂົ້າກັນ ໂດຍຜ່ານເຄືອຂ່າຍໂທລະຄົມມະນາຄົມ ເພື່ອການສົ່ງ, ການຮັບ ແລະ ການແລກປ່ຽນຂໍ້ມູນ ຂ່າວສານ;

9. **ຜູ້ໃຫ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ຜູ້ດຳເນີນກິດຈະການໃຫ້ບໍລິການໂທລະຄົມມະນາຄົມ ແລະ/ຫຼື ສະໜອງສິ່ງອຳນວຍຄວາມສະດວກດ້ານໂທລະຄົມມະນາຄົມ;

10. **ໃຊ້ບໍລິການໂທລະຄົມມະນາຄົມ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ການບໍລິການໂທລະຄົມມະນາຄົມ;

11. **ການບໍລິການລະບົບຄົມມະນາຄົມອັດສະລິຍະ (Intelligent Transport System ITS)** ໝາຍເຖິງ ການສື່ສານເພື່ອພັດທະນາຄວາມປອດໄພ ແລະ ການຄຸ້ມຄອງ ຂອງການຄົມມະນາຄົມທາງພື້ນດິນ ໃຫ້ມີປະສິດທິພາບ, ປະສິດທິຜົນສູງສຸດ ດ້ວຍການນຳໃຊ້ລະບົບບັນຊາອັດຕະໂນມັດ, ລະບົບນຳທາງ, ລະບົບຄົ້ນຫາຕຳແໜ່ງ ແລະ ອື່ນໆ, ຊຶ່ງເປັນການສື່ສານທາງພື້ນດິນທີ່ນອນໃນການສື່ສານເຄື່ອນທີ່ທາງບົກ (Land Mobile Service);

12. **ການບໍລິການອິນເຕີເນັດ ໂດຍໃຊ້ສະຖານີລອຍຟ້າລະດັບສູງ (high altitude platform station - HAPS)** ໝາຍເຖິງ ການສື່ສານເພື່ອໃຫ້ບໍລິການລະບົບໂທລະສັບເຄື່ອນທີ່ ໂດຍຕິດຕັ້ງສະຖານີສົ່ງ-ຮັບສັນຍານໂທລະສັບເຄື່ອນທີ່ເທິງສະຖານີລອຍຟ້າລະດັບສູງ ຊຶ່ງເປັນການສື່ສານທາງພື້ນດິນທີ່ນອນໃນການສື່ສານຄົງທີ່ (Fixed Service);

13. **ການບໍລິການ ໂທລະສັບມືຖື ໂດຍນຳໃຊ້ສະຖານີລອຍຟ້າລະດັບສູງ (high altitude platform station as imt base stations - HIBS)** ໝາຍເຖິງ ການສື່ສານເພື່ອໃຫ້ບໍລິການລະບົບໂທລະສັບເຄື່ອນທີ່ ໂດຍຕິດຕັ້ງສະຖານີສົ່ງ-ຮັບສັນຍານໂທລະສັບເຄື່ອນທີ່ເທິງສະຖານີລອຍຟ້າລະດັບສູງ ຊຶ່ງເປັນການສື່ສານທາງພື້ນດິນທີ່ນອນໃນການສື່ສານເຄື່ອນທີ່ (Mobile Service);

14. **ການບໍລິການອິນເຕີເນັດສັບພະສິ່ງ (Internet of Things - IoT)** ໝາຍເຖິງ ລະບົບທີ່ປະກອບດ້ວຍສິ່ງຂອງ, ວັດຖຸປະກອນ, ເຄື່ອງໃຊ້ ຫຼື ຫຼາຍສິ່ງລວມກັນທີ່ສາມາດກຳນົດຕົນຕົວ, ຮັບຮູ້ສະພາບແວດລ້ອມໄດ້, ມີປະຕິພົນໄດ້ຕອບ ແລະ ເຮັດວຽກຮ່ວມກັນໄດ້ ດ້ວຍການເຊື່ອມຕໍ່ ຜ່ານລະບົບການສື່ສານ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານໂທລະຄົມມະນາຄົມ**

ລັດ ສົ່ງເສີມວຽກງານໂທລະຄົມມະນາຄົມ ດ້ວຍການວາງນະໂຍບາຍການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ, ພັດທະນາບຸກຄະລາກອນ, ສະໜອງງົບປະມານ ແລະ ກໍ່ສ້າງໂຄງລ່າງພື້ນຖານໂທລະຄົມມະນາຄົມທີ່ຈຳເປັນ ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານບຸລິມະສິດຂອງລັດຖະບານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນ ການກໍ່ສ້າງ, ການພັດທະນາ ແລະ ການຂະຫຍາຍ ເຄືອຂ່າຍໂທລະຄົມມະນາຄົມ.

ລັດ ສົ່ງເສີມຜູ້ໃຫ້ບໍລິການໂທລະຄົມມະນາຄົມ ພັດທະນາຊັບພະຍາກອນມະນຸດ, ແຂ່ງຂັນດ້ານທຸລະກິດໂທລະຄົມມະນາຄົມ ຢ່າງເປັນທຳ ເພື່ອຮັບປະກັນຜົນປະໂຫຍດຂອງ ລັດ, ຜູ້ໃຫ້ ແລະ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ພາຍໃຕ້ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ຢ່າງເຂັ້ມງວດ.

ລັດ ຊຸກຍູ້, ສົ່ງເສີມ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຂະຫຍາຍໂຄງລ່າງພື້ນຖານໂທລະຄົມມະນາຄົມ ໄປເຖິງເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ເພື່ອໃຫ້ປະຊາຊົນສາມາດໃຊ້ບໍລິການຢ່າງທົ່ວເຖິງ ແລະ ນຳໃຊ້ເຕັກໂນໂລຊີໂທລະຄົມມະນາຄົມ ມີຄຸນນະພາບ ແລະ ທັນສະໄໝຢ່າງທົ່ວເຖິງ.

ລັດ ຊຸກຍູ້, ສົ່ງເສີມ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມ ປະກອບສ່ວນ ແລະ ມີສ່ວນຮ່ວມ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ-ສັງຄົມ, ວຽກງານແຈ້ງເຕືອນໄພ ແລະ ໄພພິບັດ, ສຶກສາ, ສາທາລະນະສຸກ ແລະ ວຽກງານສຳຄັນອື່ນ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານໂທລະຄົມມະນາຄົມ**

ວຽກງານໂທລະຄົມມະນາຄົມ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນ ຄວາມສະເໝີພາບຕໍ່ໜ້າກົດໝາຍ, ບໍ່ຈຳແນກປະຕິບັດ, ຄວາມເປັນເອກະລາດຂອງອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ ກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕາມກົດໝາຍ;
3. ຮັບປະກັນ ການຈັດສັນ ແລະ ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຢ່າງພາວະວິໄສ, ທັນເວລາ ແລະ ໂປ່ງໃສ;
4. ຮັບປະກັນ ຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ, ຄວາມລັບຂອງລັດ, ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ຮັບປະກັນ ມາດຕະຖານເຕັກນິກ, ເຊື່ອມຕໍ່ເຂົ້າກັບເຄືອຂ່າຍໂທລະຄົມມະນາຄົມຂອງພາກພື້ນ ແລະ ສາກົນ, ການບໍລິການທີ່ສະດວກ, ມີຄຸນນະພາບ, ທັນສະໄໝ ແລະ ທົ່ວເຖິງ;
6. ປົກປ້ອງສິດ ແລະ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍ ຂອງ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການ ໂທລະຄົມມະນາຄົມ ພ້ອມທັງປົກປັກຮັກສາສິ່ງແວດລ້ອມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
7. ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ກ່ຽວກັບວຽກງານໂທລະຄົມມະນາຄົມ ຢູ່ ສປປ ລາວ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານໂທລະຄົມມະນາຄົມ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການພັດທະນາບຸກຄະລາກອນ ແລະ ການພັດທະນາໂຄງລ່າງພື້ນຖານ, ການປະສານງານໃນການນຳໃຊ້ຊັບພະຍາກອນ, ມາດຕະຖານເຕັກນິກ, ການຄ້າ ແລະ ການບໍລິການດ້ານໂທລະຄົມມະນາຄົມ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ II
# ຊັບພະຍາກອນໂທລະຄົມມະນາຄົມ
## ໝວດທີ 1
## ເລກໝາຍໂທລະຄົມມະນາຄົມ

**ມາດຕາ 8 (ປັບປຸງ) ເລກໝາຍໂທລະຄົມມະນາຄົມ**

ເລກໝາຍໂທລະຄົມມະນາຄົມ ແມ່ນ ຊຸດຕົວເລກ, ຕົວອັກສອນ ຫຼື ເຄື່ອງໝາຍ ທີ່ບົ່ງບອກເຖິງເຄືອຂ່າຍໂທລະສັບ ແລະ ອຸປະກອນຕົ້ນທາງ ຫຼື ປາຍທາງ ທີ່ນໍາໃຊ້ເຂົ້າໃນວຽກງານໂທລະຄົມມະນາຄົມ.

ເລກໝາຍໂທລະຄົມມະນາຄົມ ປະກອບດ້ວຍ ລະຫັດປະເທດ, ລະຫັດແຂວງ, ລະຫັດເຄືອຂ່າຍ, ລະຫັດສັນຍານເຄືອຂ່າຍ, ເລກໝາຍໂທລະສັບ, ເລກໝາຍພິເສດ, ລະຫັດ ແລະ ເລກໝາຍໂທລະສັບປະເພດອື່ນ ທີ່ນໍາໃຊ້ກັບລະບົບໂທລະຄົມມະນາຄົມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາລົງຊີວິດ ຢູ່ ສປປ ລາວ ຕ້ອງນໍາໃຊ້ເລກໝາຍໂທລະຄົມມະນາຄົມ ຂອງ ສປປ ລາວ ເທົ່ານັ້ນ, ຍົກເວັ້ນ ກໍລະນີເລກໝາຍໂທລະສັບເຄື່ອນທີ່ ທີ່ໄດ້ເປີດນໍາໃຊ້ບໍລິການໂທຂ້າມແດນອັດຕະໂນມັດ.

**ມາດຕາ 9 (ໃໝ່) ແຜນຈັດສັນເລກໝາຍໂທລະຄົມມະນາຄົມ**

ແຜນຈັດສັນເລກໝາຍໂທລະຄົມມະນາຄົມ ແມ່ນ ການກໍານົດແຜນການນໍາໃຊ້ເລກໝາຍໂທລະຄົມມະນາຄົມ ໃຫ້ສອດຄ່ອງກັບແຜນຍຸດທະສາດຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ລະບຽບການຂອງສາກົນ.

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ສ້າງ ແລະ ປັບປຸງແຜນຈັດສັນເລກໝາຍໂທລະຄົມມະນາຄົມ ໃນແຕ່ລະໄລຍະ.

**ມາດຕາ 10 (ໃໝ່) ການຈັດສັນເລກໝາຍໂທລະຄົມມະນາຄົມ**

ການຈັດສັນເລກໝາຍໂທລະຄົມມະນາຄົມ ແມ່ນ ການແບ່ງປັນ, ຕິດຕາມ, ກວດກາ, ເກັບຄືນ, ປ່ຽນແທນ ແລະ ສະຫງວນໄວ້ ເລກໝາຍໂທລະຄົມມະນາຄົມ ໂດຍຮັບປະກັນຫຼັກການຄວາມສະເໝີພາບ, ໂປ່ງໃສ ແລະ ປະຢັດ.

ສໍາລັບການຈັດສັນເລກໝາຍໂທລະສັບ ເພື່ອອອກອະນຸຍາດໃຫ້ຜູ້ໃຫ້ບໍລິການ ແມ່ນ ຈັດສັນເປັນຊຸດເລກໝາຍໂທລະສັບ ໃນຈໍານວນໃດໜຶ່ງ. ການຂໍອະນຸຍາດນໍາໃຊ້ຊຸດເລກໝາຍໂທລະສັບຄັ້ງຕໍ່ໄປ, ຊຸດເລກໝາຍໂທລະສັບທີ່ໄດ້ຮັບອະນຸຍາດໄປແລ້ວນັ້ນ ຕ້ອງໄດ້ເປີດນໍາໃຊ້ຫຼາຍກວ່າ ເຈັດສິບສ່ວນຮ້ອຍຂຶ້ນໄປ ແລະ ຕ້ອງໄດ້ຂຶ້ນທະບຽນເລກໝາຍໂທລະສັບສໍາເລັດທັງໝົດ ຢ່າງຄົບຖ້ວນ ແລະ ຖືກຕ້ອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນໍາໃຊ້ເລກໝາຍໂທລະຄົມມະນາຄົມ ຕ້ອງຂໍອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ, ຈັດສັນ ແລະ ອະນຸຍາດການນໍາໃຊ້ເລກໝາຍໂທລະຄົມມະນາຄົມ ໂດຍສອດຄ່ອງກັບກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 11 (ປັບປຸງ) ການຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ເລກໝາຍໂທລະສັບ ຕ້ອງຂຶ້ນທະບຽນນຳຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບການ. ພາຍຫຼັງຂຶ້ນທະບຽນແລ້ວ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຈຶ່ງເປີດໃຫ້ນຳໃຊ້ບໍລິການ ແລະ ຕິດຕາມ ກວດກາ ຢ່າງເຂັ້ມງວດ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງມີລະບົບຖານຂໍ້ມູນຄົບຖ້ວນ, ຖືກຕ້ອງ ແລະ ເຊື່ອມຕໍ່ກັບລະບົບຖານຂໍ້ມູນຂອງພາກລັດ ເພື່ອສັງລວມ ແລະ ເກັບຮັກສາຂໍ້ມູນການຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ ຂອງຜູ້ໃຊ້ບໍລິການ ໃຫ້ມີຄວາມປອດໄພ ແລະ ເປັນຄວາມລັບ.

ການຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ຊັບພະຍາກອນອິນເຕີເນັດ

**ມາດຕາ 12 (ປັບປຸງ) ເລກໝາຍອິນເຕີເນັດ**

ເລກໝາຍອິນເຕີເນັດ (Internet Protocol) ແມ່ນ ຊຸດ ຕົວເລກ, ຕົວອັກສອນ ຫຼື ເຄື່ອງໝາຍທີ່ບົ່ງບອກເຖິງທີ່ຢູ່ຂອງອຸປະກອນເອເລັກໂຕຣນິກ ໃນເຄືອຂ່າຍໂທລະຄົມມະນາຄົມ ແລະ ເຄືອຂ່າຍອິນເຕີເນັດ ທີ່ໃຊ້ໃນການຕິດຕໍ່ສື່ສານ ເພື່ອສົ່ງ ແລະ ຮັບ ຂໍ້ມູນ ຂ່າວສານ ແບບເອເລັກໂຕຣນິກ.

**ມາດຕາ 13 (ປັບປຸງ) ລະຫັດຊື່ອິນເຕີເນັດ**

ລະຫັດຊື່ອິນເຕີເນັດ (Domain name) ແມ່ນ ຊື່ທີ່ຖືກນຳໃຊ້ເພື່ອລະບຸແຫນທີ່ຢູ່ໃນເຄືອຂ່າຍອິນເຕີເນັດ ຂອງເຄື່ອງແມ່ຂ່າຍ ເທິງລະບົບອິນເຕີເນັດ ຫຼື ຊື່ເວັບໄຊ ຊຶ່ງຖືກກຳນົດຕາມລຳດັບ ໂດຍຂັ້ນດ້ວຍເຄື່ອງໝາຍຈ້ຳເມັດ ໃຫ້ສາມາດຈົດຈຳໄດ້ງ່າຍ.

**ມາດຕາ 14 (ປັບປຸງ) ການຂຶ້ນທະບຽນ ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຢູ່ ສປປ ລາວ ທີ່ມີຄວາມຕ້ອງການນຳໃຊ້ເລກໝາຍອິນເຕີເນັດ ຕ້ອງຂໍອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ ກ່ອນສະເໜີຂໍເລກໝາຍອິນເຕີເນັດ ນຳອົງການຄຸ້ມຄອງເລກໝາຍອິນເຕີເນັດສາກົນ, ພາຍຫຼັງໄດ້ຮັບເລກໝາຍອິນເຕີເນັດແລ້ວ ໃຫ້ຂຶ້ນທະບຽນນຳກະຊວງເຕັກໂນໂລຊີ ແລະ ການສື່ສານ.

ສຳລັບຜູ້ໄດ້ຮັບເລກໝາຍອິນເຕີເນັດ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ກໍໃຫ້ຂຶ້ນທະບຽນເລກໝາຍອິນເຕີເນັດນຳກະຊວງເຕັກໂນໂລຊີ ແລະ ການສື່ສານ ເຊັ່ນກັນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ" .LA " ຫຼື ".ລາວ" ຕ້ອງໄດ້ຂຶ້ນທະບຽນນຳກະຊວງເຕັກໂນໂລຊີ ແລະ ການສື່ສານ.

ສຳລັບລາຍລະອຽດກ່ຽວກັບ ຂັ້ນຕອນ ແລະ ເງື່ອນໄຂ ການຂຶ້ນທະບຽນລະຫັດຊື່ອິນເຕີເນັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມ

**ມາດຕາ 15 (ປັບປຸງ) ຄື້ນຄວາມຖີ່ວິທະຍຸສື່ສານ**

ຄື້ນຄວາມຖີ່ວິທະຍຸສື່ສານ ແມ່ນ ຄື້ນແມ່ເຫຼັກໄຟຟ້າ ທີ່ເປັນຊັບພະຍາກອນທຳມະຊາດ ຊຶ່ງມີຢ່າງຈຳກັດແຜ່ກະຈາຍ ໃນອາກາດ, ອາວະກາດ ແລະ ໃຕ້ນ້ຳ ນຳໃຊ້ເຂົ້າໃນວຽກງານສື່ສານ ທີ່ມີຄື້ນຄວາມຖີ່ແຕ່ ແປດຈຸດສາມກິໂລເຮີດ ເຖິງ ສາມພັນຈິກາເຮີດ.

ການຄຸ້ມຄອງ ແລະ ການນຳໃຊ້ ຄື້ນຄວາມຖີ່ວິທະຍຸສື່ສານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ.

**ມາດຕາ 16 (ປັບປຸງ) ຕຳແໜ່ງວົງໂຄຈອນດາວທຽມ**

ຕຳແໜ່ງວົງໂຄຈອນດາວທຽມ ແມ່ນ ເສັ້ນທາງໂຄຈອນຂອງໜ່ວຍດາວທຽມທີ່ປິ່ນອ້ອມໜ່ວຍໂລກ ຫຼື ວັດຖຸອື່ນໃນຊ່ອງອາວະກາດ.

ການຄຸ້ມຄອງ, ການນຳໃຊ້ ຕຳແໜ່ງວົງໂຄຈອນດາວທຽມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ມາດຕະຖານເຕັກນິກ ແລະ ຄຸນນະພາບ

**ມາດຕາ 17 (ປັບປຸງ) ການກຳນົດມາດຕະຖານເຕັກນິກ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກຳນົດມາດຕະຖານເຕັກນິກ ຂອງອຸປະກອນໂທລະຄົມມະນາຄົມ ແລະ ເຄືອຂ່າຍໂທລະຄົມມະນາຄົມ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍມາດຕະຖານ, ມາດຕະຖານຂອງສາກົນ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

ມາດຕະຖານເຕັກນິກ ກ່ຽວກັບອຸປະກອນໂທລະຄົມມະນາຄົມ ແລະ ເຄືອຂ່າຍໂທລະຄົມມະນາຄົມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 18 (ປັບປຸງ) ການກວດກາ ແລະ ຢັ້ງຢືນ ມາດຕະຖານເຕັກນິກ**

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກຂອງອຸປະກອນໂທລະຄົມມະນາຄົມ ທີ່ປະກອບ, ຜະລິດ ຢູ່ ພາຍໃນປະເທດ ແລະ ນຳເຂົ້າຈາກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານທີ່ກຳນົດໄວ້ ເພື່ອຮັບປະກັນ ຄຸນນະພາບ, ຄວາມປອດໄພຕໍ່ຜູ້ຊົມໃຊ້, ບໍ່ທຳລາຍສິ່ງແວດລ້ອມ, ບໍ່ເປັນອັນຕະລາຍຕໍ່ເຄືອຂ່າຍໂທລະຄົມມະນາຄົມ ແລະ ສາມາດເຊື່ອມຕໍ່ໄດ້ກັບເຄືອຂ່າຍໂທລະຄົມມະນາຄົມ ຢູ່ ສປປ ລາວ, ພາກພື້ນ ແລະ ສາກົນ.

**ມາດຕາ 19 (ປັບປຸງ) ການນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມທຸກຊະນິດ ຕ້ອງຂໍອະນຸຍາດຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ເພື່ອຮັບປະກັນຄຸນນະພາບ ແລະ ມາດຕະຖານເຕັກນິກ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງສ້າງແຜນນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ປະຈຳປີ ສະເໜີຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາເພື່ອຢັ້ງຢືນ. ສຳລັບການນຳເຂົ້າ ແລະ ສົ່ງອອກ ແຕ່ລະຄັ້ງ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້.

ການນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 (ໃໝ່) ຄຸນນະພາບການບໍລິການໂທລະຄົມມະນາຄົມ**

ຄຸນນະພາບການບໍລິການໂທລະຄົມມະນາຄົມ ແມ່ນ ປະສິດທິພາບຂອງ ການໃຫ້ ແລະ ການໃຊ້ບໍລິການດ້ານໂທລະຄົມມະນາຄົມ ຕາມຄ່າມາດຕະຖານທີ່ໄດ້ກຳນົດໄວ້.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ ຄຸນນະພາບການບໍລິການດ້ານໂທລະຄົມມະນາຄົມ ໃຫ້ໄດ້ຕາມຄ່າມາດຕະຖານ ຂອງຕົວຊີ້ວັດຕ່າງໆ ຕາມການກຳນົດຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 21 (ໃໝ່) ການກວດກາຄຸນນະພາບ ການບໍລິການດ້ານໂທລະຄົມມະນາຄົມ**

ການກວດກາຄຸນນະພາບ ການບໍລິການດ້ານໂທລະຄົມມະນາຄົມ ແມ່ນ ການຕິດຕາມກວດກາ ບັນດາຕົວຊີ້ວັດ ດ້ວຍການນຳໃຊ້ອຸປະກອນທາງເຕັກນິກສະເພາະ ຕາມມາດຕະຖານທີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດ ເພື່ອວັດແທກຄຸນນະພາບ ຕາມຄ່າມາດຕະຖານຂອງການໃຫ້ບໍລິການດ້ານໂທລະຄົມມະນາຄົມ.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກວດກາ ແລະ ອອກໃບຢັ້ງຢືນຄຸນນະພາບ ການບໍລິການດ້ານໂທລະຄົມມະນາຄົມ. ພາກສ່ວນອື່ນ ກໍສາມາດກວດກາ ແລະ ອອກໃບຢັ້ງຢືນຄຸນນະພາບ ການບໍລິການດ້ານໂທລະຄົມມະນາຄົມໄດ້ ຕາມການອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ.

## ພາກທີ IV
## ການຕິດຕັ້ງອຸປະກອນ, ການເຊື່ອມຕໍ່ເຄືອຂ່າຍ
## ແລະ ການຄິດໄລ່ຄ່າເຊື່ອມຕໍ່

**ມາດຕາ 22 (ປັບປຸງ) ການຕິດຕັ້ງ ແລະ ການນຳໃຊ້ ອຸປະກອນໂທລະຄົມມະນາຄົມ**

ການຕິດຕັ້ງອຸປະກອນໂທລະຄົມມະນາຄົມ ເຊັ່ນ ລະບົບຊູມທາງໂທລະສັບ, ລະບົບສາຍສົ່ງ, ສະຖານີສົ່ງ-ຮັບສັນຍານຄື້ນຄວາມຖີ່ວິທະຍຸສື່ສານ, ສາຍອາກາດ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເສຍກ່ອນ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມທີ່ຕິດຕັ້ງອຸປະກອນໂທລະຄົມມະນາຄົມ ຕ້ອງສ້າງເງື່ອນໄຂໃຫ້ຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ ນຳໃຊ້ອຸປະກອນ ແລະ ໂຄງລ່າງພື້ນຖານໂທລະຄົມມະນາຄົມຂອງຕົນ ເພື່ອຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ແລະ ຫຼີກເວັ້ນການລົງທຶນຊໍ້າຊ້ອນ ບົນຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງມີແຜນຟື້ນຟູເຄືອຂ່າຍໂທລະຄົມມະນາຄົມ ໃນກໍລະນີເກີດໄພພິບັດ ແລະ ເຫດສຸດວິໄສ.

**ມາດຕາ 23 (ປັບປຸງ) ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ຕ້ອງປະຕິບັດຕາມຫຼັກການລວມສູນການສື່ສານ ຊຶ່ງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ສາມາດເລືອກເຊື່ອມຕໍ່ກັບເຄືອຂ່າຍຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໂດຍຜ່ານເຄືອຂ່າຍ ແລະ ຈຸດເຊື່ອມຕໍ່ຕ່າງໆ ທີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດ, ພ້ອມກັນນັ້ນ ກໍຕ້ອງສະໜອງຂໍ້ມູນການເຊື່ອມຕໍ່ເຄືອຂ່າຍ ໃຫ້ຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງຮັບປະກັນເງື່ອນໄຂທາງດ້ານເຕັກນິກການເຊື່ອມຕໍ່ ຕາມການກຳນົດຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 24 (ປັບປຸງ) ການຄິດໄລ່ຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ**

ການຄິດໄລ່ລາຄາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ຕ້ອງປະຕິບັດຕາມຫຼັກການໂປ່ງໃສ, ສະເໝີພາບ, ບໍ່ຈຳແນກ, ອີງໃສ່ຕົ້ນທຶນຕົວຈິງ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄົ້ນຄວ້າລາຄາຄ່າເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ບົນພື້ນຖານການຄົ້ນຄວ້າເຫັນດີເປັນເອກະພາບກັນກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໂດຍສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ.

## ພາກທີ V
## ການດຳເນີນທຸລະກິດ ໂທລະຄົມມະນາຄົມ

**ມາດຕາ 25 (ປັບປຸງ) ປະເພດ ການດຳເນີນທຸລະກິດ**

ການດຳເນີນທຸລະກິດໂທລະຄົມມະນາຄົມ ຢູ່ ສປປ ລາວ ມີ ສອງປະເພດ ຄື:

1. ການໃຫ້ບໍລິການໂທລະຄົມມະນາຄົມ;
2. ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມ.

**ມາດຕາ 26 (ໃໝ່) ການໃຫ້ບໍລິການໂທລະຄົມມະນາຄົມ**

ການໃຫ້ບໍລິການໂທລະຄົມມະນາຄົມ ແມ່ນ ຮູບແບບດຳເນີນທຸລະກິດ ໃຫ້ບໍລິການ ໜຶ່ງ ຫຼື ຫຼາຍ ກິດຈະການໂທລະຄົມມະນາຄົມ ທີ່ມີເຄືອຂ່າຍ ຫຼື ບໍ່ມີເຄືອຂ່າຍ ເປັນຂອງຕົນເອງ.

ການໃຫ້ບໍລິການໂທລະຄົມມະນາຄົມ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການສື່ສານເຄື່ອນທີ່;
2. ການບໍລິການ ໂທລະສັບຕັ້ງໂຕະ;
3. ການບໍລິການ ອິນເຕີເນັດ;
4. ການສື່ສານຜ່ານດາວທຽມ;
5. ການສື່ສານການສຳຫຼວດ ແລະ ຄົ້ນຫາຕຳແໜ່ງ;
6. ການບໍລິການ ລະບົບຄົມມະນາຄົມອັດສະລິຍະ;
7. ການບໍລິການ ອິນເຕີເນັດໂດຍໃຊ້ສະຖານີລອຍຟ້າລະດັບສູງ;
8. ການບໍລິການ ໂທລະສັບມືຖືໂດຍນຳໃຊ້ສະຖານີລອຍຟ້າລະດັບສູງ;
9. ການບໍລິການເສີມ;
10. ການບໍລິການ ແອບພລິເຄເຊິນ;
11. ການບໍລິການ ອິນເຕີເນັດສັບພະສິ່ງ;
12. ການບໍລິການໂທລະຄົມມະນາຄົມອື່ນ.

**ມາດຕາ 27 (ໃໝ່) ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມ**

ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມ ແມ່ນ ຮູບແບບການດຳເນີນທຸລະກິດ ເພື່ອໃຫ້ບໍລິການ ໜຶ່ງ ຫຼື ຫຼາຍ ກິດຈະການ ທີ່ຕິດພັນກັບການດຳເນີນທຸລະກິດ ດ້ານໂທລະຄົມມະນາຄົມ.

ການສະໜອງສິ່ງອຳນວຍຄວາມສະດວກດ້ານໂທລະຄົມມະນາຄົມ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການໃຫ້ເຊົ່າໂຄງລ່າງພື້ນຖານໂທລະຄົມມະນາຄົມ;
2. ການປະກອບ, ຜະລິດ ແລະ/ຫຼື ຈຳໜ່າຍ ອຸປະກອນໂທລະຄົມມະນາຄົມ;
3. ການຕິດຕັ້ງ-ສ້ອມແປງ ອຸປະກອນໂທລະຄົມມະນາຄົມ;
4. ການນຳເຂົ້າ-ສົ່ງອອກ ອຸປະກອນໂທລະຄົມມະນາຄົມ;
5. ການໃຫ້ຄຳປຶກສາດ້ານໂທລະຄົມມະນາຄົມ;
6. ການບໍລິການສູນຂໍ້ມູນ;

ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມອື່ນ.

**ມາດຕາ 28 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບໂທລະຄົມມະນາຄົມ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດນຳຫ້ອງການບໍລິການການລົງທຶນປະຕູດຽວ ຫຼື ຂະແໜງການອຸດສາຫະກຳ

ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

ການລົງທຶນໃນທຸລະກິດໂທລະຄົມມະນາຄົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້ ມີອາຍຸບໍ່ເກີນ ສິບຫ້າປີ ແລະ ສາມາດຕໍ່ໃໝ່ໄດ້.

**ມາດຕາ 29 (ໃໝ່) ເງື່ອນໄຂການດຳເນີນທຸລະກິດ**

ການດຳເນີນທຸລະກິດໂທລະຄົມມະນາຄົມ ມີເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ;
2. ມີທຶນທີ່ເໝາະສົມກັບແຕ່ລະກິດຈະການ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການ ດ້ານໂທລະຄົມມະນາຄົມ ຫຼື ໄອທີ ຢ່າງໜ້ອຍ ສອງປີ;
5. ມີທີ່ຕັ້ງສຳນັກງານ ຢູ່ ສປປ ລາວ;
6. ໄດ້ຮັບການອະນຸຍາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ສຳລັບປະເພດທຸລະກິດທີ່ຕ້ອງໄດ້ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
7. ມີເຄືອຂ່າຍໂທລະຄົມມະນາຄົມເປັນຂອງຕົນເອງ ສຳລັບຜູ້ໃຫ້ບໍລິການກິດຈະການບໍລິການອິນເຕີເນັດທົ່ວປະເທດ.

**ມາດຕາ 30 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ຕາມການກຳນົດຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ສຳເນົາຖ່າຍໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ;
3. ກົດລະບຽບຂອງວິສາຫະກິດ;
4. ສັນຍາຮ່ວມທຸລະກິດ ຖ້າມີ;
5. ຊີວະປະຫວັດຫຍໍ້ຂອງຜູ້ສ້າງຕັ້ງ;
6. ໃບຢັ້ງຢືນຖານະການເງິນ;
7. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ.

**ມາດຕາ 31 (ໃໝ່) ການພິຈາລະນາ**

ພາຍຫຼັງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມໄດ້ ກໍຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຂໍອະນຸຍາດຊາບ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກຳນົດ ຂັ້ນຕອນ ແລະ ເງື່ອນໄຂລະອຽດກ່ຽວກັບການອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ ແຕ່ລະກິດຈະການ.

**ມາດຕາ 32 (ໃໝ່) ອາຍຸໃບອະນຸຍາດ**

ໃບອະນຸຍາດຂອງການດຳເນີນທຸລະກິດໂທລະຄົມມະນາຄົມ ມີອາຍຸ ໜຶ່ງປີ ແລະ ສາມາດຕໍ່ໄດ້.

ການຕໍ່ໃບອະນຸຍາດດຳເນີນທຸລະກິດ ຕ້ອງດຳເນີນກ່ອນ ສາມສິບວັນ ກ່ອນວັນໝົດອາຍຸ ແລະ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ;
2. ສຳເນົາຖ່າຍໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ;
3. ສຳເນົາຖ່າຍໃບອະນຸຍາດດຳເນີນທຸລະກິດ;
4. ສຳເນົາຖ່າຍໃບຢັ້ງຢືນການມອບພັນທະອາກອນປະຈຳປີ;
5. ສຳເນົາຖ່າຍໃບອະນຸຍາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
6. ບົດລາຍງານການເຄື່ອນໄຫວທຸລະກິດຜ່ານມາ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຕ້ອງພິຈາລະນາຕໍ່ໃບອະນຸຍາດພາຍໃນເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

### ມາດຕາ 33 (ໃໝ່) ການໂຈະໃບອະນຸຍາດ

ການດຳເນີນທຸລະກິດໂທລະຄົມມະນາຄົມ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທີ່ມີລັກສະນະບໍ່ຮ້າຍແຮງ;
4. ສ້າງຜົນເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
5. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກ່ອນການໂຈະໃບອະນຸຍາດ ໃນກໍລະນີທີ 2 ຫາ 5 ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຕ້ອງແຈ້ງເຕືອນຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອປັບປຸງແກ້ໄຂ ຕາມການແຈ້ງເຕືອນ.

### ມາດຕາ 34 (ໃໝ່) ການຍົກເລີກໃບອະນຸຍາດ

ການດຳເນີນທຸລະກິດໂທລະຄົມມະນາຄົມ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
2. ບໍ່ປັບປຸງແກ້ໄຂຕາມສາເຫດທີ່ມີການໂຈະ;
3. ມີຄຳຕັດສິນ ໃຫ້ຍຸບເລີກວິສາຫະກິດ ຫຼື ໃຫ້ລົ້ມລະລາຍ;
4. ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
5. ລະເມີດກົດໝາຍ, ລະບຽບການຢ່າງຮ້າຍແຮງ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ສິດ, ພັນທະ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ

### ມາດຕາ 35 (ປັບປຸງ) ສິດ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ສະເໜີຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກ່ຽວກັບການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ, ການເຊື່ອມຕໍ່ເຄືອຂ່າຍ, ການຢັ້ງຢືນຄຸນນະພາບ ແລະ ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;
2. ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ຕາມການອະນຸຍາດ;
3. ປະກອບ, ຜະລິດ, ສົ່ງອອກ, ນຳເຂົ້າ, ຈຳໜ່າຍ ແລະ ຕິດຕັ້ງອຸປະກອນໂທລະຄົມມະນາຄົມຕາມປະເພດ ການດຳເນີນທຸລະກິດໂທລະຄົມມະນາຄົມ;

4. ນຳໃຊ້, ສົ່ງຄືນ, ປ່ຽນແທນ, ໃຫ້ເຊົ່າ ຊັບພະຍາກອນໂທລະຄົມມະນາຄົມ ຕາມການເຫັນດີ ແລະ ອະນຸຍາດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;

5. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳໃຊ້ສະຖານທີ່, ທີ່ດິນ, ຖະໜົນ, ຮ່ອງລະບາຍນ້ຳ, ອາຄານ, ສິ່ງກໍ່ສ້າງ ແລະ ອື່ນໆ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

6. ສະເໜີ ຂໍນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມ ນຳຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;

7. ສະເໜີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອພິຈາລະນາປັບປຸງອັດຕາຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ;

8. ໂຈະ ຫຼື ຍົກເລີກ ການບໍລິການ ແກ່ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ທີ່ບໍ່ຊຳລະຄ່າບໍລິການ ຫຼື ນຳໃຊ້ການບໍລິການ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ສະເໜີໂຈະ ຫຼື ຍົກເລີກ ການດຳເນີນທຸລະກິດ;

10. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ;

11. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 (ປັບປຸງ) ພັນທະ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີພັນທະ ດັ່ງນີ້:

1. ສ້າງແຜນການດຳເນີນທຸລະກິດໂທລະຄົມມະນາຄົມຂອງຕົນ ໃຫ້ສອດຄ່ອງກັບແຜນພັດທະນາໂທລະຄົມມະນາຄົມແຫ່ງຊາດ;

2. ຖ່າຍທອດຄວາມຮູ້ທາງດ້ານເຕັກໂນໂລຊີທີ່ນຳເຂົ້າມາໃຫ້ບໍລິການ ຢູ່ ສປປ ລາວ ໃຫ້ພະນັກງານຂະແໜງການເຕັກໂນໂລຊີ ແລະ ການສື່ສານ ແລະ ພະນັກງານຂອງຕົນ;

3. ຮັບປະກັນລະບົບເຕັກນິກຂອງຕົນ ໃຫ້ສາມາດເຊື່ອມຕໍ່ເຂົ້າກັບລະບົບເຕັກນິກຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;

4. ຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

5. ປະຕິບັດລະບຽບການດ້ານບັນຊີການເງິນ ແລະ ພັນທະການເງິນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ໃຫ້ບໍລິການ ຢ່າງທົ່ວເຖິງ, ມີບໍລິການເປັນພາສາລາວ ແລະ ພາສາອື່ນ, ສາມາດນຳໃຊ້ໄດ້ຕະຫຼອດ ຊາວສີ່ຊົ່ວໂມງ, ມີຄຸນນະພາບ, ມີຄວາມສະດວກວ່ອງໄວ, ໂປ່ງໃສ ແລະ ຖືກຕ້ອງ;

7. ໃຫ້ບູລິມະສິດໃນການສະໜອງການບໍລິການໂທລະຄົມມະນາຄົມ ແກ່ອົງການຈັດຕັ້ງຂອງລັດ;

8. ມີແຜນຟື້ນຟູ ເຄືອຂ່າຍໂທລະຄົມມະນາຄົມໃນກໍລະນີເກີດໄພພິບັດ, ວິກິດການ ຫຼື ພາວະສຸກເສີນ;

9. ເກັບກູ້ອຸປະກອນໂທລະຄົມມະນາຄົມທີ່ບໍ່ໄດ້ນຳໃຊ້ແລ້ວ ເພື່ອຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມປອດໄພຕໍ່ ຊີວິດ, ຊັບສິນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ;

10. ສົ່ງຄືນ ຫຼື ປ່ຽນແທນ ເລກໝາຍໂທລະຄົມມະນາຄົມ ຕາມການຕົກລົງຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ, ໃນກໍລະນີມີຜົນກະທົບຕໍ່ຜູ້ໃຊ້ບໍລິການ ຜູ້ໃຫ້ບໍລິການ ຕ້ອງປ່ຽນແທນ ຫຼື ທົດແທນ ໃຫ້ແກ່ຜູ້ໃຊ້ບໍລິການ ຕາມລະບຽບການ;

11. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ໃຫ້ທັນກັບສະພາບການ;

12. ຮັບ ແລະ ແກ້ໄຂ ຄຳສະເໜີຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ;

13. ສະໜອງການເຊື່ອມຕໍ່ເຂົ້າກັບລະບົບເຕັກນິກ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ພັດທະນາຂຶ້ນ ຕາມຄວາມຕ້ອງການຂອງວຽກງານໃນແຕ່ລະໄລຍະ;

14. ອຳນວຍຄວາມສະດວກໃຫ້ຜູ້ໃຫ້ບໍລິການອື່ນນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມຂອງຕົນ;

15. ສ້າງລະບົບເກັບກຳ ແລະ ປົກປ້ອງ ຂໍ້ມູນຂອງຜູ້ໃຊ້ບໍລິການບໍ່ໃຫ້ຮົ່ວໄຫຼ ຕາມການກຳນົດຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;

16. ຂຶ້ນທະບຽນເລກໝາຍໂທລະສັບ ທີ່ເປີດນຳໃຊ້ບໍລິການ ໃນເຄືອຂ່າຍຂອງຕົນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ;

17. ແກ້ໄຂບັນຫາ ແລະ ທົດແທນຄວາມເສຍຫາຍທີ່ເກີດຈາກການໃຫ້ບໍລິການຂອງຕົນ;

18. ລາຍງານການເຄື່ອນໄຫວ ແລະ ແຜນການເຄື່ອນໄຫວດຳເນີນທຸລະກິດຂອບເຂດປະຈຳເດືອນ, ໄຕມາດ, ປະຈຳປີ ຕໍ່ ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;

19. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37 (ປັບປຸງ) ສິດ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ.**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ໄດ້ຮັບການບໍລິການຢ່າງມີຄຸນນະພາບ, ມາດຕະຖານ, ໂປ່ງໃສ, ວ່ອງໄວ ແລະ ຍຸຕິທຳ;
2. ສະເໜີຂໍ້ມູນ ກ່ຽວກັບການບໍລິການ, ຄ່າບໍລິການ ແລະ ຄຸນນະພາບຂອງການບໍລິການ;
3. ໄດ້ຮັບການທົດແທນຄວາມເສຍຫາຍທີ່ເກີດຂຶ້ນຈາກການບໍລິການຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ສະເໜີຕໍ່ຜູ້ໃຫ້ການບໍລິການ ຫຼື ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອກວດກາ ແລະ ແກ້ໄຂໃນກໍລະນີພົບຂໍ້ສົງໄສ ຫຼື ບັນຫາ ທີ່ເກີດຈາກການນຳໃຊ້ບໍລິການໂທລະຄົມມະນາຄົມ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 (ປັບປຸງ) ພັນທະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີພັນທະ ດັ່ງນີ້:

1. ຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັບຜິດຊອບຕໍ່ໜ້າກົດໝາຍ ຂອງເລກໝາຍໂທລະຄົມມະນາຄົມ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ ທີ່ຂຶ້ນທະບຽນ ຢູ່ ສປປ ລາວ;
3. ປະຕິບັດຕາມເງື່ອນໄຂຂອງສັນຍານຳໃຊ້ບໍລິການກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ຊຳລະຄ່າບໍລິການໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ

**ມາດຕາ 39 (ປັບປຸງ) ກອງທຶນພັດທະນາ ໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ**

ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນການຫັນເປັນເສດຖະກິດດິຈິຕອນ, ການຂະຫຍາຍ ແລະ ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ໄປເຖິງຊົນນະບົດເຂດຫ່າງໄກສອກຫຼີກ, ການພັດທະນາຊັບພະຍາກອນມະນຸດ, ລະບົບຖານດິຈິຕອນ (Digital platform), ຄວາມປອດໄພຂອງການນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີດິຈິຕອນ.

**ມາດຕາ 40 (ປັບປຸງ) ແຫຼ່ງກອງທຶນ**

ກອງທຶນພັດທະນາ ໂທລະຄົມມະນາຄົມ ແລະ ການຫັນເປັນດີຈິຕອນ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ການປະກອບສ່ວນຂອງງົບປະມານແຫ່ງລັດ;
2. ການນຳໃຊ້ລະບົບຖານດີຈິຕອນ (Digital platform), ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສ້າງ ແລະ/ຫຼື ຮ່ວມສ້າງຂຶ້ນ;
3. ການປະກອບສ່ວນ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
4. ການຊ່ວຍເຫຼືອ ແລະ ປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງ ພາຍໃນ ແລະ ຕ່າງປະເທດ;
5. ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 41 (ປັບປຸງ) ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນພັດທະນາ ໂທລະຄົມມະນາຄົມ ແລະ ການຫັນເປັນດີຈິຕອນ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈິຕອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 42 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດໂທລະຄົມມະນາຄົມປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຊັບພະຍາກອນ, ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ນຳໃຊ້ການບໍລິການໂທລະຄົມມະນາຄົມ ໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ;
4. ໃຊ້ອຸປະກອນໂທລະຄົມມະນາຄົມ ເພື່ອລົບກວນ, ທຳລາຍ, ລັກຕໍ່, ລັກຟັງ ແລະ ກັ່ນຕອງເອົາຂໍ້ມູນ ຂ່າວສານ ຂອງຜູ້ອື່ນ;
5. ທຳລາຍອຸປະກອນໂທລະຄົມມະນາຄົມ ຂອງບຸກຄົນ ຫຼື ຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
6. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43 (ປັບປຸງ) ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຫ້າມ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີພຶດຕິກຳ ດັ່ງນີ້:

1. ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຊັບພະຍາກອນ, ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໂດຍບໍ່ຖືກຕ້ອງຕາມການອະນຸຍາດ;

3. ນຳເຂົ້າ ແລະ ເປີດໃຫ້ບໍລິການ ເຕັກໂນໂລຊີໃໝ່ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;

4. ເຊື່ອມຕໍ່ກັບເຄືອຂ່າຍໂທລະຄົມມະນາຄົມອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

5. ມີການກະທຳໃດໜຶ່ງ ທີ່ເປັນການແຂ່ງຂັນໂທລະຄົມມະນາຄົມ ທີ່ບໍ່ເປັນທຳ;

6. ໂຈະ ຫຼື ຍົກເລີກການໃຫ້ບໍລິການ ໂດຍບໍ່ແຈ້ງ ຫຼື ກ່າວເຕືອນລ່ວງໜ້າໃຫ້ຜູ້ໃຊ້ບໍລິການ, ຍົກເວັ້ນການ ໂຈະ ຫຼື ຍົກເລີກ ເພື່ອຄວາມໝັ້ນຄົງຂອງຊາດ;

7. ເປີດນຳໃຊ້ບໍລິການໃດໜຶ່ງ ໃຫ້ຜູ້ໃຊ້ບໍລິການໂດຍທີ່ບໍ່ໄດ້ລົງທະບຽນນຳໃຊ້;

8. ເປີດເຜີຍຂໍ້ມູນທາງລັດຖະການ ແລະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;

9. ຂຶ້ນ ຫຼື ຫຼຸດ ຄ່າບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;

10. ໂຄສະນາເກີນຄວາມເປັນຈິງ, ໝິ່ນປະໝາດບຸກຄົນ ຫຼື ນິຕິບຸກຄົນອື່ນ, ເຜີຍແຜ່ສິ່ງລາມົກອະນາຈານ, ສົ່ງເສີມການພະນັນ;

11. ທຳລາຍອຸປະກອນໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການອື່ນ, ທຳລາຍສິ່ງແວດລ້ອມ ແລະ ທິວທັດທຳມະຊາດ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 44 (ປັບປຸງ) ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

ຫ້າມ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ການບໍລິການໂທລະຄົມມະນາຄົມ ໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ
2. ບໍ່ປະຕິບັດຕາມເງື່ອນໄຂຂອງການນຳໃຊ້ ຕາມສັນຍາບໍລິການ;
3. ນຳໃຊ້ເລກໝາຍໂທລະສັບ ໂດຍບໍ່ຂຶ້ນທະບຽນ;
4. ຊຳລະຄ່າບໍລິການບໍ່ຖືກຕ້ອງ ແລະ ຄົບຖ້ວນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 45 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບທາງລັດຖະການ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານກ່ຽວກັບໂທລະຄົມມະນາຄົມ;

2. ສວຍໃຊ້ອຳນາດໜ້າທີ່ ຕຳແໜ່ງ ເພື່ອຜົນປະໂຫຍດຂອງ ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ລວມໝູ່ ຫຼື ສັງຄົມ ແລະ ການຈັດຕັ້ງ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ທີ່ການຈັດຕັ້ງມອບໝາຍໃຫ້;

4. ດຳເນີນທຸລະກິດໂທລະຄົມມະນາຄົມ;

5. ດຳລົງຕຳແໜ່ງໃດໜຶ່ງ ຫຼື ເປັນທີ່ປຶກສາໃຫ້ຜູ້ບໍລິການໂທລະຄົມມະນາຄົມ, ຍົກເວັ້ນ ຜູ້ໄດ້ຮັບການແຕ່ງຕັ້ງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ IX
# ການຄຸ້ມຄອງ ແລະ ການກວດກາວຽກງານໄຫລະຄົມມະນາຄົມ
## ໝວດທີ 1
## ການຄຸ້ມຄອງວຽກງານໄທລະຄົມມະນາຄົມ

**ມາດຕາ 46 (ປັບປຸງ) ອົງການຄຸ້ມຄອງວຽກງານໄທລະຄົມມະນາຄົມ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານໄທລະຄົມມະນາຄົມ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານໄທລະຄົມມະນາຄົມ ປະກອບດ້ວຍ:

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ;
3. ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານໄທລະຄົມມະນາຄົມ ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າຮ່າງນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາ ກ່ຽວກັບວຽກງານໄທລະຄົມມະນາຄົມ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ຄົ້ນຄວ້າ ຫັນເອົາ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາ ກ່ຽວກັບວຽກງານໄທລະຄົມມະນາຄົມ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ໃນຂອບເຂດທົ່ວປະເທດ;
3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາ ກ່ຽວກັບວຽກງານໄທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;
4. ຄຸ້ມຄອງ ແລະ ນໍາໃຊ້ ກອງທຶນພັດທະນາໄທລະຄົມມະນາຄົມ ແລະ ການທັນເປັນດິຈິຕອນ ໃຫ້ຖືກຕ້ອງຕາມລະບຽບການ;
5. ຄຸ້ມຄອງ ແລະ ຕິດຕາມ ເຄືອຂ່າຍໄທລະຄົມມະນາຄົມ, ອັດຕາ ຄ່າທໍານຽມ ແລະ ຄ່າບໍລິການ ພ້ອມທັງຊຸກຍູ້ຜູ້ໃຫ້ບໍລິການໄທລະຄົມມະນາຄົມ ໃຫ້ຂະຫຍາຍເຄືອຂ່າຍການບໍລິການຢ່າງທົ່ວເຖິງ ແລະ ລົງສູ່ເຂດຫ່າງໄກສອກຫຼີກ ຫຼື ເຂດບູລິມະສິດຂອງລັດຖະບານ;
6. ຄົ້ນຄວ້າ ສ້າງ ແລະ ກໍານົດມາດຕະຖານເຕັກນິກ, ກວດກາ, ຢັ້ງຢືນ ຄຸນນະພາບ ອຸປະກອນ ແລະ ການບໍລິການ ໄທລະຄົມມະນາຄົມ;
7. ຄຸ້ມຄອງ, ພັດທະນາ, ຈັດສັນ, ຕິດຕາມ ແລະ ກວດກາ ການນໍາໃຊ້ຊັບພະຍາກອນໄທລະຄົມມະນາຄົມ ຢ່າງມີປະສິດທິພາບ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
8. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດໍາເນີນທຸລະກິດໄທລະຄົມມະນາຄົມ;
9. ອອກໃບຢັ້ງຢືນ ແຜນນໍາເຂົ້າ ແລະ ສົ່ງອອກ ອຸປະກອນໄທລະຄົມມະນາຄົມປະຈໍາປີ ແລະ ໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກອຸປະກອນໄທລະຄົມມະນາຄົມ;
10. ເກັບຄ່າທໍານຽມ ແລະ ຄ່າບໍລິການ ໄທລະຄົມມະນາຄົມຕ່າງໆ ຕາມລະບຽບການ;
11. ເກັບກໍາຂໍ້ມູນສະຖິຕິ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໄທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ;

12. ແກ້ໄຂຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບຄຸນນະພາບ, ມາດຕະຖານ ຂອງການບໍລິການໄທລະຄົມມະນາຄົມ;

13. ນຳໃຊ້ຊັບພະຍາກອນ ແລະ ໂຄງລ່າງພື້ນຖານໄທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການ ໃນກໍລະນີຈຳເປັນ ເຊັ່ນ ຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານໄພພິບັດ ແລະ ວຽກງານບຸລິມະສິດ ຂອງລັດຖະບານ;

14. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານໄທລະຄົມມະນາຄົມ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານໄທລະຄົມມະນາຄົມ;

16. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານໄທລະຄົມມະນາຄົມຕໍ່ລັດຖະບານຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານໄທລະຄົມມະນາຄົມ ພະແນກເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໄທລະຄົມມະນາຄົມ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ກ່ຽວກັບວຽກງານໄທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;

3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໄທລະຄົມມະນາຄົມ;

4. ກວດກາ, ຢັ້ງຢືນ ຄຸນນະພາບ ອຸປະກອນ ແລະ ການບໍລິການ ໄທລະຄົມມະນາຄົມ;

5. ອອກ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກອຸປະກອນໄທລະຄົມມະນາຄົມ;

6. ແກ້ໄຂຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບຄຸນນະພາບ, ມາດຕະຖານ ຂອງການບໍລິການໄທລະຄົມມະນາຄົມ;

7. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໄທລະຄົມມະນາຄົມປະເພດຕ່າງໆ ຕາມລະບຽບການ;

8. ເກັບກຳ ແລະ ຄຸ້ມຄອງ ຂໍ້ມູນສະຖິຕິ ຂອງ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໄທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

9. ປະສານສົມທົບກັບພະແນກການ, ຫ້ອງການ ແລະ ອົງການປົກຄອງຂັ້ນເມືອງ ກ່ຽວກັບວຽກງານໄທລະຄົມມະນາຄົມ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານໄທລະຄົມມະນາຄົມ ຕໍ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານໄທລະຄົມມະນາຄົມ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໄທລະຄົມມະນາຄົມ;

2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;

3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດໍາເນີນທຸລະກິດໂທລະຄົມມະນາຄົມ;

4. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໂທລະຄົມມະນາຄົມ;

5. ແກ້ໄຂຄໍາສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບຄຸນນະພາບ, ມາດຕະຖານ ຂອງການບໍລິການໂທລະຄົມມະນາຄົມ;

6. ເກັບຄ່າທໍານຽມ ແລະ ຄ່າບໍລິການ ໂທລະຄົມມະນາຄົມຕ່າງໆ ຕາມລະບຽບການ;

7. ເກັບກໍາຂໍ້ມູນສະຖິຕິ ຂອງຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

8. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານ ກ່ຽວກັບວຽກງານໂທລະຄົມມະນາຄົມ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂອງຕົນຕໍ່ພະແນກເຕັກໂນໂລຊີ ແລະ ການສື່ສານ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາວຽກງານໂທລະຄົມມະນາຄົມ

### ມາດຕາ 50 (ປັບປຸງ) ອົງການກວດກາວຽກງານໂທລະຄົມມະນາຄົມ

ອົງການກວດກາວຽກງານໂທລະຄົມມະນາຄົມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນ.

### ມາດຕາ 51 (ປັບປຸງ) ເນື້ອໃນການກວດກາ

ການກວດກາວຽກງານໂທລະຄົມມະນາຄົມ ມີເນື້ອໃນ ດັ່ງນີ້:

1. ກວດກາ ການວາງແຜນ, ການດໍາເນີນທຸລະກິດ, ການສໍາຫຼວດ, ການອອກແບບກໍ່ສ້າງ ແລະ ຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;

2. ກວດກາ ມາດຕະຖານຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນການກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;

3. ກວດກາ ມາດຕະຖານເຕັກນິກ ແລະ ຄຸນນະພາບ ຂອງເຄືອຂ່າຍໂທລະຄົມມະນາຄົມ;

4. ກວດກາ ການນໍາໃຊ້ຊັບພະຍາກອນ ແລະ ການນໍາເຂົ້າອຸປະກອນໂທລະຄົມມະນາຄົມ;

5. ປະສານສົມທົບກັບຂະແໜງການການເງິນ ກວດກາລະບົບບັນຊີການເງິນ;

6. ກວດກາ ການປະມູນ, ສັນຍາຮັບເໝົາກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ, ການປະຕິບັດສັນຍາຕ່າງໆ;

7. ກວດກາ ການຈັດຕັ້ງປະຕິບັດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ.

**ມາດຕາ 52 ຮູບການການກວດກາ**

ການກວດກາວຽກງານໄຫລະຄົມມະນາຄົມ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານໄຫລະຄົມມະນາຄົມ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ X
## ວັນໄທລະຄົມມະນາຄົມແຫ່ງຊາດ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 53 ວັນໄທລະຄົມມະນາຄົມແຫ່ງຊາດ**

ລັດ ກຳນົດເອົາວັນທີ 13 ມີນາ ເປັນວັນໄທລະຄົມມະນາຄົມແຫ່ງຊາດ, ແຕ່ລະປີຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ.

**ມາດຕາ 54 (ປັບປຸງ) ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ**

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ມີເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 55 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການລົງທຶນກໍ່ສ້າງ, ພັດທະນາໄທລະຄົມມະນາຄົມ, ຂະຫຍາຍເຄືອຂ່າຍ, ຜະລິດອຸປະກອນ ແລະ ບໍລິການໄທລະຄົມມະນາຄົມ ຢ່າງມີປະສິດທິຜົນ, ມີຄວາມກ້າວໜ້າ, ທັນສະໄໝ, ມີຄຸນນະພາບສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 56 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 57 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຊັບພະຍາກອນ, ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ນຳເຂົ້າ ແລະ ເປີດໃຫ້ບໍລິການ ເຕັກໂນໂລຊີໃໝ່ ໂດຍບໍ່ໄດ້ຮັບອະນຸຍາດ;
4. ເຊື່ອມຕໍ່ກັບເຄືອຂ່າຍໂທລະຄົມມະນາຄົມອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ໂຈະ ຫຼື ຍົກເລີກການໃຫ້ບໍລິການ ໂດຍບໍ່ແຈ້ງ ຫຼື ກ່າວເຕືອນລ່ວງໜ້າ ໃຫ້ຜູ້ໃຊ້ບໍລິການ ພາຍຫຼັງຖືກກ່າວເຕືອນຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານແລ້ວ;
6. ເປີດນຳໃຊ້ບໍລິການໃດໜຶ່ງ ໃຫ້ຜູ້ໃຊ້ບໍລິການໂດຍທີ່ບໍ່ໄດ້ລົງທະບຽນນຳໃຊ້;
7. ຂຶ້ນ ຫຼື ຫຼຸດ ຄ່າບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 58 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບເລກທີ 09 / ສພຊ, ລົງວັນທີ 21 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ